ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

PCD

ເລກທີ: 905 /ພກພ

ນະຄອນຫຼວງວຽງຈັນ, ວັນທີ: 27 APR 2023

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມ ລະບຽບ ວ່າດ້ວຍການເປີດເຜີຍຂໍ້ມູນ ຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 008/ຕລຊລ , ລົງວັນທີ 27 ກັນຍາ 2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ທີ່ໄດ້ຈັດຂຶ້ນ ໃນວັນທີ 27 ເມສາ 2023 ເວລາ 10:10 ໂມງ, ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂດຍມີຜູ້ເຂົ້າຮ່ວມທັງໝົດ 20 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 7 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 13 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 546.573.300 ຮຸ້ນ, ເທົ່າກັບ 93,91% ຂອງຈຳນວນຮຸ້ນທັງໝົດຂອງ ບໍລິສັດ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 546.573.300 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2022 ແລະ ເອກະສານ ລາຍງານການເງິນ ປະຈຳປີ 2022 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 546.573.300 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

1 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

Scanned with CamScanner

ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່າຍເງິນປັນຜົນ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 546.573.300 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 546.573.300 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2023

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 546.573.300 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງການຕໍ່ອາຍຸການຂອງສະພາບໍລິຫານ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 546.573.300 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທາ ພົມມະຈິດ

Scanned with CamScanner